# ລາຍການກວດ

State of Oregon
Employment Department

**ຖ້າທ່ານຕົກງານ, ທ່ານອາດຈະມີສິດໄດ້ຮັບເງິນອຸດໜູນຈາກໂຄງການປະກັນໄພຫວ່າງງານ. ເພື່ອໃຫ້ໄດ້ຮັບເງິນອຸດໜູນທີ່ທ່ານມີສິດໄດ້ຮັບ, ທ່ານຈຳເປັນຕ້ອງວຽກງານເຫຼົ່ານີ້ໃຫ້ສຳເລັດ. ຖ້າທ່ານມີຄຳຖາມ ຫຼື ຕ້ອງການຄວາມຊ່ວຍເຫຼືອ, ທ່ານສາມາດສົ່ງຂໍ້ຄວາມຫາພວກເຮົາທີ່ unemployment.oregon.gov/contact ຫຼື ໂທຫາ 877-345-3484.**

☐ ຍື່ນຄຳຮ້ອງຂໍເບື້ອງຕົ້ນຂອງທ່ານເພື່ອຂໍເງິນອຸດໜູນ.
  **ອອນໄລນ໌**: unemployment.oregon.gov
  **ໂທລະສັບ**: 877-345-3484

☐ ເລີ່ມຊອກວຽກທັນທີ ແລະ ເກັບບັນທຶກການຊອກວຽກຂອງທ່ານໄວ້.

☐ ຮັບປະກັນວ່າທ່ານຕອບສະໜອງເງື່ອນໄຂການມີສິດໄດ້ຮັບທັງຫມົດ, ລວມທັງຄວາມສາມາດ ແລະ ຄວາມພ້ອມໃນການໄປເຮັດວຽກ. ສຶກສາເພີ່ມເຕີມໄດ້ທີ່ unemployment.oregon.gov.

☐ ສົ່ງຄຳຮ້ອງຂໍປະຈຳອາທິດໃນແຕ່ລະອາທິດເພື່ອໃຫ້ໄດ້ຮັບສິນເຊື່ອສຳລັບອາທິດລໍຖ້າຂອງທ່ານ ແລະ ທຸກໆອາທິດຫຼັງຈາກນັ້ນ.
  **ອອນໄລນ໌**: unemployment.oregon.gov
  **ໂທລະສັບ**: 800-982-8920

☐ ສຳເລັດການລົງທະບຽນໃນ iMatchSkills® ຂອງທ່ານໄດ້ທີ່ imatchskills.org.

☐ ພົບກັບຊ່ວຍຊານຂອງ WorkSource Oregon Employment ແບບໜຶ່ງຕໍ່ໜຶ່ງເພື່ອເຮັດປະຖົມນິ ເທດ. ທ່ານສາມາດໄປບ່ອນນັ້ນດ້ວຍຕົນເອງ ຫຼື ນັດໝາຍທາງອອນໄລນ໌ໄດ້. ໂທຫາ ຫຼື ເຂົ້າເບິ່ງສູນ WorkSource Oregon, ຫຼື ໄປທີ່ worksourceoregon.org/contact ເພື່ອນັດໝາຍ.

☐ ການຢືນຢັນຕົວຕົນ. ໃນລະຫວ່າງການປະຖົມນິເທດຂອງທ່ານກັບ WorkSource Oregon, ໃຫ້ສະແດງ ເອກະສານລະບຸຕົວຕົນຫຼັກສອງສະບັບ ຫຼື ເອກະສານລະບຸຕົວຕົນຫຼັກໜຶ່ງສະບັບ ແລະ ເອກະສານລະບຸ ຕົວຕົນສຳຮອງສອງສະບັບ.
ທ່ານສາມາດຄົ້ນຫາຂໍ້ມູນເພີ່ມເຕີມກ່ຽວກັບເອກະສານທີ່ຍອມຮັບໄດ້ທີ່ unemployment.oregon.gov/ID.

ສູນ WorkSource Oregon ໃຫ້ການຊ່ວຍເຫຼືອບຸກຄົນທີ່ກຳລັງຊອກວຽກຟຣີ.
ບໍ່ມີຄ່າໃຊ້ຈ່າຍສຳລັບການ ເຂົ້າເຖິງຄອມພິວເຕີຢູ່ຫ້ອງການ WorkSource Oregon ໃນທ້ອງຖິ່ນຂອງທ່ານ.
WorkSource Oregon ໃຫ້ການຊ່ວຍເຫຼືອເປັນຫຼາຍພາສາ. ໂທຫາເບີໂທການເຂົ້າເຖິງພາສາຕ່າງໆຂອງ WorkSource Oregon ໄດ້ທີ່ 833-685-0845.

**ຕ້ອງການຊ່ວຍເຫຼືອບໍ່?** ກົມຈັດງານແຫ່ງລັດອໍຣິກອນ (OED) ຄືໜ່ວຍງານໃຫ້ໂອກາດຢ່າງເທົ່າທຽມກັນ. OED ຈັດໃຫ້ມີການຊ່ວຍເຫຼືອທີ່ບໍ່ເສຍຄ່າ ເພື່ອວ່າທ່ານຈະສາມາດໃຊ້ບໍລິການຂອງພວກເຮົາ. ບາງຕົວຢ່າງແມ່ນລ່າມແປພາສາມື ແລະ ພາສາເວົ້າ, ເນື້ອຫາລາຍລັກອັກສອນເປັນພາສາອື່ນໆ, ແບບພິມໃຫຍ່, ສຽງ ແລະ ຮູບແບບອື່ນໆ. ເພື່ອຮັບການຊ່ວຍເຫຼືອ, ກະລຸນາເຂົ້າເບິ່ງ unemployment.oregon.gov ແລະ ຄລິກໃສ່ ຕິດຕໍ່ພວກເຮົາ ຫຼື ໂທຫາພວກເຮົາທີ່ໝາຍເລກ 877-345-3484. ຜູ້ໃຊ້ TTY ໂທ 711.